# ມິຊຊາສຳລັບຜູ້ລ່ວງລັບ



**ພຣະວໍລະສານໂດຍນັກບຸນຢວງ 3, 16-17**

ພຣະເຈົ້າຊົງຮັກມະນຸດຢ່າງເຫລືອລົ້ນ ຈົນໄດ້ປະທານພຣະເອກະບຸດມາຊ່ວຍທຸກຄົນທີ່ເຊື່ອໃນພຣະອົງບໍ່ໃຫ້ພິນາດຈິບຫາຍ, ແຕ່ໃຫ້ໄດ້ຊີວິດນິລັນດອນ. ຍ້ອນວ່າພຣະເຈົ້າບໍ່ໄດ້ຊົງໃຊ້ພຣະບຸດມາພິພາກສາໂລກ ແຕ່ມາຊ່ວຍໂລກໃຫ້ຮອດ ດ້ວຍອາໄສພຣະບຸດນັ້ນ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ຢວງ 3, 16-17**

ໃນຊີວິດຂອງພວກເຮົາ, ເມື່ອເວົ້າເຖິງຄວາມຕາຍບາງຄັ້ງກໍເຮັດໃຫ້ພວກເຮົາເກີດມີຄວາມຢ້ານ. ຢ້ານຍ້ອນຈະໄດ້ແຍກຈາກບ່ອນທີ່ເຄີຍຢູ່, ຄົນທີ່ເຄີຍຮັກແພງແລະຮູ້ຈັກ, ວຽກງານທີ່ເຄີຍເຮັດ, ຊີວິດປະຈຳວັນທີ່ພວກເຮົາມີຄວາມລຶ້ງເຄີຍແລະຜູກພັນ. ສິ່ງຕ່າງໆເຫລົ່ານີ້ ເຮັດໃຫ້ພວກເຮົາບໍ່ຢາກຈາກໂລກນີ້ໄປ. ເຖິງຢ່າງໃດກໍຕາມ, ພວກເຮົາທຸກຄົນກໍບໍ່ຫລີກພົ້ນຄວາມຕາຍໄປໄດ້. ຍ້ອນມີເກີດ ກໍຕ້ອງມີເຈັບປ່ວຍແລະເສຍຊີວິດ. ແຕ່ປານນັ້ນກໍດີ, ພວກເຮົາກໍຍັງມີຄວາມຢ້ານ. ຢ້ານຍ້ອນພວກເຮົາຍັງບໍ່ໄດ້ຕຽມພ້ອມ. ພ້ອມທີ່ຈະປະເຊີງໜ້າກັບຄວາມຈິງຂອງຊີວິດ, ພ້ອມທີ່ຈະໄປປາກົດຢູ່ຕໍ່ໜ້າພຣະເຈົ້າ.

ກົງກັນຂ້າມ, ຖ້າພວກເຮົາມີການກະກຽມໃນຊີວິດຄວາມເຊື່ອຂອງພວກເຮົາແຕ່ລະວັນ, ຄວາມຢ້ານກໍຄ່ອຍໆໝົດໄປ ແລະສິ່ງທີ່ມາແທນຄວາມຢ້ານໃນຊີວິດຂອງພວກເຮົາກໍຄືຄວາມຮັກ: ຮັກພຣະເຈົ້າ ແລະຮັກເພື່ອນມະນຸດ. ຄວາມຮັກນີ້ແລເປັນເຄື່ອງໝາຍແຫ່ງການປະທັບຢູ່ຂອງພຣະເຈົ້າໃນຊີວິດຂອງເຮົາ ແລະເຮັດໃຫ້ພວກເຮົາພ້ອມທີ່ຈະໄປຢືນຢູ່ຕໍ່ໜ້າພຣະອົງດ້ວຍຄວາມຍິນດີ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍເຕືອນແລະຕຽມຈິດໃຈຂອງພວກເຮົາໃຫ້ຢູ່ໃນຄວາມພ້ອມສະເໝີທີ່ຈະໄປພົບພຣະອົງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ